MINNESOTA DEPARTMENT OF HEALTH

STAY SAFE MN




# ການທົດສອບໂຄວິດ-19 ຢູ່ເຮືອນ

12/15/2020

ມິນນີໂຊຕ້າ ແລະ ການບໍລິການຕູ້ປິ່ນປົວໄດ້ຮ່ວມມືກັນເພື່ອນໍາສະເໜີ ການກວດສອບຫາໂຄວິດ-19 ຜ່ານການກວດນໍ້າລາຍ ແບບງ່າຍດາຍແລະເຮັດໄດ້ໃນເຮືອນສໍາລັບທຸກຄົນຜູ້ທີ່ອາໃສໃນລັດມິນນີໂຊຕ້າ, ທັງຜູ້ທີ່ມີອາການ ຫຼື ບໍ່ມີອາການ. ໃນການທົດສອບຫາເຊື້ອ ທ່ານສາມາດສັ່ງໃຫ້ມາກວດຢູ່ເຮືອນ, ທີ່ບໍ່ມີຄ່າໃຊ້ຈ່າຍໃດໆ: ຫ້ອງກວດເຄື່ອນທີ່: ບໍ່ມີຄ່າໃຊ້ຈ່າຍໃນການກວດຫາໂຄວິດສໍາລັບທຸກຄົນໃນລັດມິນນີໂຊຕ້າ (https://learn.vaulthealth.com/state-ຂອງ-minnesota/).

ຖ້າທ່ານຕ້ອງການກວດທັນທີ, ຊອກຫາຕົວເລືອກຂອງການກວດດ້ວຍຕົວເອງທີ່ Find Testing Locations: https://mn.gov/covid19/get-tested/testing-locations/index.jsp.

- ການກວດທາງນໍ້າລາຍນີ້ແມ່ນມີຄວາມຖືກຕ້ອງຊັດເຈນເທົ່າກັບການກວດຜ່ານການແຍ່ຜົ້ງດັງ. ມັນກວດຫາວ່າ ໃນປັດຈຸບັນທ່ານເປັນໂຄວິດ-19 ແລະ ສາມາດແຜ່ລະບາດໃຫ້ແກ່ຜູ້ອື່ນ. ມັນບໍ່ແມ່ນການກວດທີ່ບອກວ່າ ທ່ານເຄີຍເປັນໂຄວິດ-19 ແລ້ວໃນໄລຍະຜ່ານມາ.
- ການກວດຜ່ານນໍ້າລາຍແມ່ນມີໃຫ້ທຸກຄົນທົ່ວລັດມິນນີໂຊຕ້າ.
    - ຖ້າທ່ານມີປະກັນໄພ, ທ່ານຕ້ອງບອກຂໍ້ມູນຂອງທ່ານເພື່ອທີ່ບໍລິສັດປະກັນສຸຂະພາບຂອງທ່ານສາມາດຈ່າຍສໍາລັບຄ່າໃຊ້ຈ່າຍດັ່ງກ່າວ. ຖ້າປະກັນສຸຂະພາບຂອງທ່ານບໍ່ສາມາດຈ່າຍຄ່າກວດຫາໂຄວິດ-19, ຫຼື ຈ່າຍໃຫ້ບໍ່ພໍ, ລັດຈະເປັນຜູ້ຮັບຜິດຊອບສໍາລັບຄ່າໃຊ້ຈ່າຍດັ່ງກ່າວ. ຖ້າທ່ານບໍ່ມີປະກັນສຸຂະພາບ, ລັດຈະເປັນຜູ້ຈ່າຍຄ່າກວດຂອງທ່ານ. ທ່ານຈະບໍ່ໄດ້ຮັບໃບບິນເກັບເງິນ.
    - ຢ່າຂຽນຂໍ້ມູນບັດເຄຼດິດຂອງທ່ານໃນເວັບໄຊທ໌ຫ້ອງການເຄື່ອນທີ່. ຖ້າທ່ານຖືກຖາມສໍາລັບຂໍ້ມູນບັດຂອງທ່ານ, ໃຫ້ອອກຈາກລະບົບ ແລະ ລອງເຂົ້າໃໝ່ອີກຄັ້ງໜຶ່ງ. ເພື່ອຂໍການກວດທີ່ບໍ່ມີຄ່າໃຊ້ຈ່າຍ, ເຂົ້າໄປໃນເວັບໄຊທ໌ໂດຍການເຂົ້າໄປລິ້ງຂ້າງລຸ່ມນີ້. ຖ້າທ່ານຖືກໃຫ້ຈ່າຍຄ່າກວດ, ກະລຸນາສົ່ງອີເມວມາທີ່ testathome.mdh@state.mn.us.
- ທັງຜູ້ໃຫຍ່ ແລະ ເດັກນ້ອຍສາມາດນໍາໃຊ້ການກວດເຫຼົ່ານີ້. ຜູ້ໃຫຍ່ທີ່ມີອາຍຸ 18 ຫຼື ຫຼາຍກວ່ານັ້ນຕ້ອງຂໍການກວດໃຫ້ເດັກນ້ອຍ. ໃນປັດຈຸບັນ, ມີທີ່ຢູ່ອີເມວທີ່ແຕກຕ່າງກັນສໍາລັບແຕ່ລະຄົນທີ່ຕ້ອງການກວດ.

- ການກວດຜ່ານນ້ຳລາຍອາດຈະບໍ່ເໝາະກັບຄົນທີ່ລຳບາກໃນການຜະລິດນ້ຳລາຍ, ເຊັ່ນວ່າ ເດັກນ້ອຍ ຫຼື ຜູ້ທີ່ເປັນພະຍາດເສັ້ນເລືອດອຸດຕັນໃນສະໝອງ.

# ວິທີການຮັບການກວດ

- ຫ້າມກິນ, ຫຍໍ້າ, ຫຼື ດື່ມ ສິ່ງໃດໆ (ແມ້ແຕ່ນ້ຳດື່ມ) ເປັນເວລາ 30 ນາທີ ກ່ອນຈະເຂົ້າຮັບການກວດ.
- ເມື່ອທ່ານພ້ອມແລ້ວທີ່ຈະເຂົ້າຮັບການກວດ, ເຂົ້າໄປໃນ ຫ້ອງລໍຖ້າໃນຫ້ອງກວດເຄື່ອນທີ່ (https://app.vaulthealth.com/login?redirectUrl=https://app.vaulthealth.com/waiting-room&simple=true/) ແລະ ເບິ່ງວິດີໂອກັບຜູ້ຄວບຄຸມການທົດສອບໃນຫ້ອງກວດເຄື່ອນທີ່, ຊຶ່ງລາວຈະໃຫ້ຄຳແນະນຳແກ່ທ່ານ.
- ຫຼັງຈາກນັ້ນຜົນການທົດສອບຂອງທ່ານຈະຖືກສົ່ງໄປໃນຫ້ອງແລັບໃນລັດມິນນີໂຊຕ້າ ຫຼື ລັດນິວເຈີຊີ, ໂດຍການໃຊ້ຊອງຈົດໝາຍທີ່ຈ່າໜ້າຊອງໄວ້ລ່ວງໜ້າທີ່ມາພ້ອມກັບການກວດ ເມື່ອມັນມາຮອດຫ້ອງແລັບ, ທ່ານຈະໄດ້ຮັບຜົນກວດຂອງທ່ານຜ່ານທາງອີເມວພາຍໃນ 24-48 ຊົ່ວໂມງ.

# ພາຍຫຼັງທີ່ຮັບການກວດ

- ຂ້ອຍໄດ້ກວດແລ້ວ—ຕໍ່ໄປແມ່ນຫຍັງອີກ? (https://mn.gov/covid19/get-tested/i-got-tested-now-what/index.jsp)
- ສິ່ງທີ່ຕ້ອງເຮັດໃນເວລາທີ່ທ່ານລໍຖ້າ ຜົນກວດໂຄວິດ-19 (https://www.health.state.mn.us/diseases/coronavirus/waiting.html)

# ຂໍ້ມູນເພີ່ມເຕີມ

- ຄຳຖາມທີ່ພົບເລື້ອຍໆກ່ຽວກັບການກວດ ໂຄວິດ-19: (https://mn.gov/covid19/get-tested/faq/index.jsp).
- ທາງເລືອກໃນການກວດດ້ວຍຕົວເອງ, ແບບບໍ່ຫຍຸ້ງຍາກ: ສະຖານທີ່ກວດໂຄວິດ-19 ໃນຊຸມຊົນ: (https://mn.gov/covid19/for-minnesotans/get-tested/community-testing.jsp).
- ຖ້າທ່ານມີຄຳຖາມກ່ຽວກັບການກວດນ້ຳລາຍ, ກະລຸນາອີເມວມາທີ່ mn@vaulthealth.com ຫຼື ໂທ 800-800-5698. ຜູ້ຕາງໜ້າຫ້ອງກວດເຄື່ອນທີ່ຈະໂທກັບຫາທ່ານ ຫຼື ອີເມວຫາທ່ານໄວເທົ່າທີ່ຈະໄວໄດ້.
- ຫົວຂໍ້ຕ່າງໆກ່ຽວກັບການໄດ້ຮັບຜົນການກວດ ຫຼື ການຮ້ອງທຸກຂອງທ່ານກ່ຽວກັບປະກັນສຸຂະພາບ ຫຼື ການສໍ້ໂກງ: ມີການຮ້ອງທຸກບໍ່? (https://mn.gov/covid19/get-tested/feedback/index.jsp).
- ຖ້າທ່ານຕ້ອງການສິ່ງອຳນວຍຄວາມສະດວກສຳລັບຄົນພິການ ຫຼື ຕ້ອງການຮັບບໍລິການການແປພາສາ, ກະລຸນາສົ່ງອີເມວ ໄປທີ່ accessibility@vaulthealth.com.

MINNESOTA

ພະແນກ ສາທາລະນະສຸກ ລັດມິນນີໂຊຕ້າ (Minnesota Department of Health) | health.mn.gov | 651-201-5000
625 Robert Street North, PO Box 64975, St. Paul, MN 55164-0975

ຕິດຕໍ່ health.communications@state.mn.us ເພື່ອຂໍຂໍ້ມູນໃນຮູບແບບອື່ນ. (Lao)